ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດບັນທຶກການພົບປະ

## ລະຫວ່າງ

## ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ແລະ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເພື່ອປຶກສາຫາລື ວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້

ໃນວັນທີ 9 ມີນາ 2022, ເວລາ 10:00 ໂມງ ທີ່ຫ້ອງປະຊຸມ ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຈັດກອງປະຊຸມພົບປະ ລະຫວ່າງ ທ່ານລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ທ່ານລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ໂດຍມີຕາງໜ້າຈາກກົມວິຊາການຂອງສອງກະຊວງເຂົ້າຮ່ວມ ຊຶ່ງມີຈຳນວນທັງໝົດ 09 ທ່ານ, ຍິງ 02 ທ່ານ (ຕາມບັນຊີລາຍຊື່ຜູ້ເຂົ້າຮ່ວມຊ້ອນທ້າຍ).

I. ຈຸດປະສົງ:

ເພື່ອສືບຕໍ່ປຶກສາຫາລື ກ່ຽວກັບການມອບ-ຮັບ ວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ລະຫວ່າງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 11 ພະຈິກ 2021 ຕາມດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021 ແລະ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021.

II. ເນື້ອໃນ ແລະ ຜົນຂອງກອງປະຊຸມ:

ກອງປະຊຸມ ໄດ້ທົບທວນຄືນຄວາມເປັນມາຂອງການມອບ-ໂອນວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ຄື: ການມອບໂອນວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ແມ່ນການຄົ້ນຄວ້າຂອງຄະນະປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ ໂດຍແມ່ນຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງຂັ້ນສູນກາງ ແລະ ລັດຖະບານໄດ້ມີມະຕິວ່າດ້ວຍການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງຜັນຂະຫຍາຍມະຕິຂອງສະພາແຫ່ງຊາດ ກ່ຽວກັບ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ສະບັບເລກທີ 07/ລບ, ລົງວັນທີ 4 ຕຸລາ 2021 ແລະ ໄດ້ຜັນຂະຫຍາຍອອກມາເປັນດຳລັດ ຂອງສອງກະຊວງ ກຳນົດໜ້າທີ່, ຂອບເຂດສິດ ຄົບຖ້ວນ, ຈະແຈ້ງ ເປັນບ່ອນອີງໃຫ້ສອງກະຊວງ ປະຕິບັດວຽກງານຕ່າງໆ.

1. ລັດຖະບານ ໄດ້ກຳນົດໜ້າທີ່, ຂອບເຂດສິດ ຢູ່ໃນດຳລັດ 603/ນຍ ແລະ ດຳລັດ 604/ນຍ ໂດຍມີບົດບັນທຶກມອບ-ຮັບ ວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 11 ພະຈິກ 2021;
2. ຫຼັງຈາກທີ່ໄດ້ມອບ-ຮັບວຽກງານດັ່ງກ່າວແລ້ວ ໃນການຈັດຕັ້ງປະຕິບັດຕົວຈິງ ສອງກະຊວງໄດ້ອອກແຈ້ງການເຖິງຂະແໜງການຂອງຕົນຂັ້ນທ້ອງຖິ່ນ ໃຫ້ດຳເນີນການມອບ-ຮັບ ໂດຍກະຊວງກະສິກຳ ແລະ ປ່າໄມ້ ໄດ້ແຈ້ງການ ໃຫ້ກະກຽມຮັບເອົາວຽກງານປຸງແຕ່ງກະສິກຳຂັ້ນຕົ້ນ ແລະ ປຸງແຕ່ງໄມ້ ຢູ່ຂັ້ນທ້ອງຖິ່ນຈາກຂະແໜງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0104/ກປ, ລົງວັນທີ 13 ມັງກອນ 2022; ກະຊວງອຸດສາຫະກຳ

ແລະ ການຄ້າ ໄດ້ແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດວຽກການສົ່ງເສີມ ແລະ ຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງກະສິກຳ ແລະ ປ່າໄມ້ ຂັ້ນຕົ້ນ ສະບັບເລກທີ 0002/ອຄ.ກອຫ, ລົງວັນທີ 4 ມັງກອນ 2022 ຊຶ່ງເຫັນວ່າຍັງບໍ່ທັນເປັນໄປຕາມເນື້ອໃນ ຂອງບົດບັນທຶກມອບ-ຮັບ ວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ທີ່ສອງກະຊວງໄດ້ເຊັນກັນໃນວັນທີ 11 ພະຈິກ 2021 ທີ່ຜ່ານມາ ແລະ ເຫັນວ່າຍັງບໍ່ທັນເປັນເອກະພາບ ແລະ ບໍ່ສາມາດຈັດຕັ້ງປະຕິບັດໄດ້.

3. ສອງກະຊວງ ຕົກລົງເຫັນດີເປັນເອກະພາບ ກ່ຽວກັບການມອບ-ຮັບວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຕາມດຳລັດ 603/ນຍ ແລະ ດຳລັດ 604/ນຍ ແລະ ການມອບຮັບວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້ໃນວັນທີ 11 ພະຈິກ 2021 ດັ່ງນີ້:
   - ເປັນຜູ້ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ, ພັດທະນາ ໂຮງງານອຸດສາຫະກຳປຸງແຕ່ງກະສິກຳ ແລະ ປ່າໄມ້ ເຊັ່ນ: ການອອກອະນຸຍາດສ້າງຕັ້ງໂຮງງານ ລວມມີ: ບົດວິພາກເສດຖະກິດ-ເຕັກນິກ ແລະ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ, ມາດຕະຖານໂຮງງານ, ປະຕິບັດມາດຕະຖານຫລັກການຜະລິດທີ່ດີ (GMP), ການຄຸ້ມຄອງຂອງຜະລິດຕະພັນ; ການໂຈະ, ຖອນ, ຍົກເລີກ ໃບຢັ້ງຢືນດຳເນີນກິດຈະການ ໃນ 11 ລາຍການຂອງດຳລັດ 603/ນຍ;
   - ການຈັດຕັ້ງກຳລັງການຜະລິດ, ພັດທະນາການຜະລິດ, ຄຸ້ມຄອງການຜະລິດຕາມທິດທັນເປັນທັນສະໄໝ;
   - ຊຸກຍູ້, ສົ່ງເສີມການຜະລິດເປັນວັດຖຸດິບ, ຄຸນນະພາບຂອງຜົນຜະລິດ, ການຄຸ້ມຄອງວັດຖຸດິບສົ່ງເຂົ້າ, ການຄຸ້ມຄອງຜະລິດຕະພັນສົ່ງອອກ;
   - ເປັນຜູ້ເຈລະຈາ ທາງດ້ານສຸຂານາໄມພືດ ແລະ ສັດ (SPS) ເພື່ອເປີດຕະຫລາດ, ຄວບຄຸມດ້ານເຕັກນິກ ໃຫ້ໄປຕາມມາດຕະຖານປະເທດຄູ່ຄ້າ, ມາດຕະຖານຂອງແຕ່ລະປະເທດ ແລະ ເງື່ອນໄຂຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ເຊັ່ນ: ມາດຕະຖານການປູກ; ຢັ້ງຢືນເຂດການຜະລິດ, ແນວພັນ, ຖິ່ນກຳເນີດ, ມາດຕະຖານການຜະລິດ, ຢັ້ງຢືນພະຍາດຕ່າງໆ, ແມງໄມ້-ສັດຕູພືດ, ສານເຄມີຕົກຄ້າງ, ເຕັກນິກການຜະລິດ, ການປະສົມປຸ໋ຍຕ່າງໆ;
   - ປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນການຈັດຕັ້ງປະຕິບັດວຽກງານປຸງແຕ່ງກະສິກຳ ແລະ ປຸງແຕ່ງໄມ້ ເພື່ອໃຫ້ວຽກງານສາມາດດຳເນີນໄປຢ່າງເປັນລະບົບ, ຖືກຕ້ອງ ແລະ ສອດຄ່ອງກັບດຳລັດ ຂອງສອງກະຊວງ.
   - ປະຕິບັດສິດ ແລະ ຫນ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນດຳລັດສະບັບເລກທີ 603/ນຍ.

4. ສອງກະຊວງເຫັນດີເປັນເອກະພາບ ກ່ຽວກັບການຄຸ້ມຄອງມະຫາພາກ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ດັ່ງນີ້:
   - ເປັນຜູ້ຄຸ້ມຄອງມະຫາພາກ ເຊັ່ນ: ການຂຶ້ນທະບຽນວິສາຫະກິດ, ຕິດຕາມ ກວດກາ ມາດຕະຖານເຕັກນິກໂຮງງານ ຄວາມປອດໄພ, ສຸຂານາໄມແຮງງານ ແລະ ສິ່ງແວດລ້ອມໂຮງງານ, ສົ່ງເສີມການປະຕິບັດຫລັກການຜະລິດທີ່ດີ (GMP), ມາດຕະຖານສິນຄ້າ ທີ່ຊົມໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ;
   - ເປັນຜູ້ເຈລະຈາ ກ່ຽວກັບໂກຕ້າສົ່ງອອກຜະລິດຕະພັນກະສິກຳ (ພືດ-ສັດ) ແລະ ຜະລິດຕະພັນປຸງແຕ່ງ;

- ປະສານສົມທົບກັບກະຊວງກະສິກຳ ແລະ ປ່າໄມ້ ໃນການຈັດຕັ້ງປະຕິບັດວຽກງານປຸງແຕ່ງກະສິກຳ ແລະ ປຸງແຕ່ງໄມ້ ເພື່ອໃຫ້ວຽກງານສາມາດດຳເນີນໄປຢ່າງເປັນລະບົບ, ຖືກຕ້ອງ ແລະ ສອດຄ່ອງກັບດຳລັດ ຂອງສອງກະຊວງ;
- ແລກປ່ຽນນິຕິກຳ ແລະ ຂໍ້ມູນສະຖິຕິ ຕ່າງໆ ທີ່ກ່ຽວຂ້ອງກັບວຽກປຸງແຕ່ງ ກະສິກຳ ແລະ ປ່າໄມ້ ຮ່ວມກັບ ກະຊວງກະສິກຳ ແລະ ປ່າໄມ້;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນດຳລັດສະບັບເລກທີ 604/ນຍ.

5. ບັນດານິຕິກຳ ທີ່ບໍ່ສອດຄ່ອງກັບດຳລັດ ສະບັບເລກທີ 603/ນຍ ແລະ 604/ນຍ ສອງກະຊວງ ຈະຮ່ວມກັນຄົ້ນຄວ້າ, ປະເມີນຄືນ ແລະ ນຳສະເໜີຂັ້ນເທິງປັບປຸງ;
6. ສອງກະຊວງ ເຫັນດີໃຫ້ຂະແໜງການຂອງຕົນຢູ່ຂັ້ນທ້ອງຖິ່ນ ດຳເນີນການມອບ-ຮັບວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ຢ່າງຂາດໂຕຕາມເນື້ອໃນ ຂອງບົດບັນທຶກມອບ-ຮັບ ວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້, ລົງວັນທີ 11 ພະຈິກ 2021 ແລະ ເນື້ອໃນບົດບັນທຶກພົບປະສະບັບນີ້.

ດັ່ງນັ້ນ, ຈຶ່ງເຮັດບົດບັນທຶກສະບັບນີ້ ເປັນຫຼັກຖານ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ນະຄອນຫຼວງວຽງຈັນ, ວັນທີ 5 ເມສາ 2022

| | |
|---|---|
| ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ | ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ |
| ປອ. ເພັດ ພົມພິພັກ | ປອ.ຄຳແພງ ໄຊສົມແພງ |

## ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມພົບປະ ລະຫວ່າງ ທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ແລະ ທ່ານ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເພື່ອປຶກສາຫາລື ກ່ຽວກັບ ວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້

## ຄັ້ງວັນທີ 09 ມີນາ 2022,

## ທີ່ ຫ້ອງປະຊຸມກະຊວງອຸດສາຫະກຳ ແລະ ການຄ້າ

ກະຊວງອຸດສາຫະກຳ ແລະ ການຄ້າ

1. ທ່ານ ປອ ຄຳແພງ ໄຊສົມແພງ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ
2. ທ່ານ ປອ ບົວວັນ ວິລະວົງ ຫົວໜ້າກົມອຸດສາຫະກຳ ແລະ ຫັດຖະກຳ
3. ທ່ານ ວັນໄຊ ແກ້ວຄຳພັນ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ
4. ທ່ານ ສະຫວາດ ຂຸນດາວົງ ຮອງຫົວໜ້າກົມອຸດສາຫະກຳ ແລະ ຫັດຖະກຳ
5. ທ່ານ ນາງ ມະນີຈັນ ສອນຄຳໄຊ ຫົວໜ້າພະແນກ, ເລຂາລັດຖະມົນຕີ, ຫ້ອງການກະຊວງ

ກະຊວງກະສິກຳ ແລະ ປ່າໄມ້

1. ທ່ານ ປອ ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້
2. ທ່ານ ບຸນທະວີ ໄຊຍະເພັດ ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ
3. ທ່ານ ບົວຈັນ ສີຫາວົງ ຮອງຫົວໜ້າຫ້ອງການ, ກະຊວງກະສິກຳ ແລະ ປ່າໄມ້
4. ທ່ານ ນາງ ມະລິນີ ອໍເພັດສານ ຜູ້ຊ່ວຍເລຂາລັດຖະມົນຕີ